**ພັກປະຊາຊົນປະຕິວັດລາວ**

ຄະນະເລຂາທິການສູນກາງພັກ ເລກທີ 166 /ຄລສພ

ນະຄອນຫຼວງວຽງຈັນ, ວັນທີ 05 / 08 / 2026

# ມະຕິຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາທິດສະດີສູນກາງພັກ

- **ອີງຕາມ** ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ;
- **ອີງຕາມ** ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 071/ກມສພ, ລົງວັນທີ 5 ພຶດສະພາ 2019 ວ່າດ້ວຍການສ້າງຕັ້ງສະພາທິດສະດີສູນກາງພັກ;
- **ອີງຕາມ** ການສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 688/ຄຈສພ, ລົງວັນທີ 03 ສິງຫາ 2026.

## ຄະນະເລຂາທິການສູນກາງພັກ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ມະຕິຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາທິດສະດີສູນກາງພັກ.

**ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດ**

ສະພາທິດສະດີສູນກາງພັກ ຂຽນເປັນຕົວອັກສອນຫຍໍ້ວ່າ: **(ສທພ)**, ຂຽນເປັນພາສາອັງກິດ: **Central Party Theoretical Council ( CPTC )**, ແມ່ນການຈັດຕັ້ງໜຶ່ງທີ່ຂຶ້ນກັບການຊີ້ນຳໂດຍກົງ ຂອງກົມການເມືອງສູນກາງພັກ;

ສະພາທິດສະດີສູນກາງພັກ ປະຕິບັດພາລະບົດບາດໃຫ້ຄຳປຶກສາແກ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ກ່ຽວກັບແນວຄິດ-ທິດສະດີ ຂອງພັກ ເພື່ອເປັນພື້ນຖານໃຫ້ແກ່ການກຳນົດ, ປັບປຸງ ແລະ ບູລະນະແນວທາງ, ນະໂຍບາຍ ຂອງພັກໃນແຕ່ລະໄລຍະ; ຄົ້ນຄວ້າຫົວຂໍ້ລະດັບຊາດໃນຂົງເຂດທິດສະດີການເມືອງ, ການປົກຄອງ, ເສດຖະກິດ-ສັງຄົມ ແລະ ຂົງເຂດອື່ນໆ ເພື່ອຮັບໃຊ້ໃຫ້ແກ່ວຽກງານນຳພາ ຂອງພັກ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3: ໜ້າທີ່**

1. ຄົ້ນຄວ້າ, ກຳນົດທິດທາງ ແລະ ແຜນການເຄື່ອນໄຫວຂອງສະພາທິດສະດີສູນກາງພັກ ໃນແຕ່ລະປີ ແລະ ຕະຫຼອດສະໄໝ ເພື່ອນຳສະເໜີກົມການເມືອງ ແລະ ຄະນະເລຂາທິການສູນກາງພັກຮັບຮອງເອົາ;

2. ດຳເນີນການຄົ້ນຄວ້າໂດຍກົງຫົວຂໍ້ໃດໜຶ່ງທີ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ມອບໝາຍໃຫ້ ຫຼື ຕົກລົງອະນຸມັດ ຕາມການສະເໜີຂອງສະພາທິດສະດີສູນກາງພັກ;

3. ກຳນົດໂຄງການຄົ້ນຄວ້າທິດສະດີລະດັບຊາດ; ຕົກລົງມອບໂຄງການ ຫຼື ຫົວຂໍ້ຄົ້ນຄວ້າໃຫ້ອົງການ, ສະຖາບັນຄົ້ນຄວ້າ ແລະ ໜ່ວຍງານທີ່ກ່ຽວຂ້ອງນຳໄປຈັດຕັ້ງປະຕິບັດ, ຊຸກຍູ້, ຕິດຕາມ, ກວດກາ ແລະ ໃຫ້ຄຳແນະນຳແກ່ເຈົ້າຂອງໂຄງການຄົ້ນຄວ້າ ເພື່ອຮັບປະກັນໃຫ້ການຄົ້ນຄວ້າໄດ້ດຳເນີນໄປຢ່າງຖືກຕ້ອງກັບທິດທາງ, ເປົ້າໝາຍ ແລະ ຂັ້ນຕອນທີ່ກຳນົດໄວ້;

4. ຄົ້ນຄວ້າ, ວິໄຈ ແລະ ຕີລາຄາບັນຫາຕ່າງໆ ທີ່ກ່ຽວຂ້ອງກັບໜ້າທີ່ຮັບຜິດຊອບ ຂອງສະພາທິດສະດີສູນກາງພັກ ທີ່ອົງການ, ສະຖາບັນຄົ້ນຄວ້າ, ຂະແໜງການ, ທ້ອງຖິ່ນ ສະເໜີຕໍ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງ, ຄະນະເລຂາທິການສູນກາງພັກ;

5. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາຫຼັກສູດທິດສະດີການເມືອງຂັ້ນຕົ້ນ, ຂັ້ນກາງ ແລະ ຂັ້ນສູງ ຕາມການສະເໜີ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ;

6. ຄົ້ນຄວ້າ, ນຳສະເໜີ, ອະທິບາຍ, ໄຈ້ແຍກ ແລະ ຕອບແກ້ບັນຫາຕ່າງໆເກີດຂຶ້ນໃໝ່ ທີ່ກໍ່ໃຫ້ເກີດທັດສະນະ, ຄວາມຮັບຮູ້ທີ່ຜິດເຂວ ໃນສັງຄົມ ຕໍ່ແນວທາງ, ນະໂຍບາຍ ຂອງພັກ;

7. ພິຈາລະນາຮັບຮອງເອົາຜົນການຄົ້ນຄວ້າໂຄງການ, ຫົວຂໍ້ທີ່ກົມການເມືອງ, ຄະນະເລຂາທິການສູນກາງພັກ, ມອບໝາຍໃຫ້ ຫຼື ຕົກລົງອະນຸມັດຕາມການສະເໜີຂອງ ສະພາທິດສະດີສູນກາງພັກ ເພື່ອນຳສະເໜີໃຫ້ປະທານສະພາທິດສະດີສູນກາງພັກ ອະນຸມັດ ແລະ ຮັບຮອງເອົາຢ່າງເປັນທາງການ;

8. ຈັດຕັ້ງ ແລະ ດຳເນີນກອງປະຊຸມສຳມະນາທິດສະດີໃນລະດັບຕ່າງໆ ທັງພາຍໃນ ແລະ ຕ່າງປະເທດໃນຫົວຂໍ້, ບັນຫາຕ່າງໆ ຕາມການເຫັນດີ ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ;

9. ຄຸ້ມຄອງກົງຈັກການຈັດຕັ້ງ, ພື້ນຖານໂຄງລ່າງ ແລະ ການກໍ່ສ້າງຖັນແຖວພະນັກງານ-ລັດຖະກອນ, ນັກຄົ້ນຄວ້າທິດສະດີ-ນັກວິທະຍາສາດ ຂອງສະພາທິດສະດີສູນກາງພັກ; ວາງລະບອບ, ລະບຽບ, ກົນໄກກ່ຽວກັບການຈັດຕັ້ງ ແລະ ການຄຸ້ມຄອງການຄົ້ນຄວ້າທິດສະດີ;

10. ປະສານສົມທົບກັບບັນດາອົງການ, ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອໃຫ້ການຮ່ວມມືໃນການສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ໃຫ້ແກ່ການຈັດຕັ້ງປະຕິບັດໂຄງການຄົ້ນຄວ້າທິດສະດີ;

11. ພົວພັນກັບອົງການຄົ້ນຄວ້າທິດສະດີ ຂອງບັນດາພັກການເມືອງເພື່ອນມິດຍຸດທະສາດ ແລະ ພັກກຳອຳນາດທີ່ກ້າວໜ້າໃນທົ່ວໂລກ, ຮ່ວມມືກັບບັນດາອົງການ ແລະ ນັກຄົ້ນຄວ້າຕ່າງປະເທດ ເພື່ອຄົ້ນຄວ້າທິດສະດີ ຕາມການເຫັນດີ ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ;

12. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ.

**ມາດຕາ 4: ຂອບເຂດສິດ**

1. ເປັນເຈົ້າການສ້າງແຜນການຄົ້ນຄວ້າ, ແຜນການສົນທະນາໃນບັນຫາຕ່າງໆ ເພື່ອເປັນຂໍ້ມູນໃຫ້ແກ່ສະພາທິດສະດີສູນກາງພັກ ກໍ່ຄືສູນກາງພັກ; ພ້ອມນັ້ນກໍ່ມີຄວາມຮັບຜິດຊອບຕໍ່ຜົນການຄົ້ນຄວ້າຂອງຕົນ;

2. ຄົ້ນຄວ້າ, ເກັບກຳຂໍ້ມູນ, ແລກປ່ຽນບົດຮຽນ, ສະຫຼຸບຕີລາຄາ, ປະເມີນຜົນ ແລະ ສະເໜີທັດສະນະ ແລະ ຄວາມຄິດເຫັນຂອງຕົນ ຕໍ່ແນວທາງ, ນະໂຍບາຍຂອງພັກ ຫຼື ນິຕິກຳໃດໜຶ່ງ ທີ່ເຫັນວ່າບໍ່ສອດຄ່ອງ ເພື່ອໃຫ້ກົມການເມືອງ, ຄະນະເລຂາທິການສູນກາງພັກ ພິຈາລະນາ;

3. ຮັບຮອງເອົາໂຄງການ, ຜົນການຄົ້ນຄວ້າທິດສະດີລະດັບຊາດ ແລະ ຄົ້ນຄວ້າພິຈາລະນາຕຳແໜ່ງວິຊາການໃຫ້ແກ່ນັກຄົ້ນຄວ້າທິດສະດີທີ່ມີຜົນງານພົ້ນເດັ່ນ ເພື່ອສະເໜີໃຫ້ພາກສ່ວນກ່ຽວຂ້ອງຕົກລົງແຕ່ງຕັ້ງຕາມລະບຽບການ;

4. ຕິດຕາມກວດກາ ແລະ ຊຸກຍູ້ບຸກຄົນ ແລະ ການຈັດຕັ້ງກ່ຽວຂ້ອງ ໃນການຈັດຕັ້ງຄົ້ນຄວ້າບັນດາໂຄງການ ແລະ ຫົວຂໍ້ວິທະຍາສາດ ທີ່ສະພາທິດສະດີສູນກາງພັກ ມອບໃຫ້;

5. ໄດ້ຮັບຂໍ້ມູນທີ່ຈຳເປັນ ຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບໃຊ້ໃຫ້ແກ່ການຄົ້ນຄວ້າທິດສະດີ; ເຂົ້າຮ່ວມໃນການຄົ້ນຄວ້າທິດສະດີ ຂອງພັກ; ເຂົ້າຮ່ວມຕິດຕາມກອງປະຊຸມສາມັນ ແລະ ວິສາມັນຂອງຄະນະບໍລິຫານງານສູນກາງພັກ, ລັດຖະບານ, ສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ;

6. ຕົກລົງເຊັນສັນຍາ ກັບຂະແໜງການ ຫຼື ທ້ອງຖິ່ນ ເພື່ອລົງເລິກຄົ້ນຄວ້າຫົວຂໍ້ສະເພາະໃດໜຶ່ງ ຫຼື ບັນຫາໃດໜຶ່ງທີ່ກ່ຽວພັນກັບການຄົ້ນຄວ້າທິດສະດີ ພ້ອມທັງເປັນຜູ້ຄຸ້ມຄອງການຄົ້ນຄວ້າທິດສະດີດັ່ງກ່າວ;

7. ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຊ່ວຍຈຳກ່ຽວກັບການຄົ້ນຄວ້າທິດສະດີກັບບັນດາພັກເພື່ອນມິດຍຸດທະສາດ ແລະ ພັກກຳອຳນາດທີ່ກ້າວໜ້າ ແລະ ອົງການທີ່ກ່ຽວຂ້ອງກັບການຄົ້ນຄວ້າທິດສະດີ ຂອງຕ່າງປະເທດຕາມການຕົກລົງເຫັນດີ ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ;

8. ເຊີນຜູ້ຊ່ຽວຊານ, ນັກທິດສະດີ, ນັກວິທະຍາສາດ ຈາກພາຍໃນປະເທດ, ປະເທດເພື່ອນມິດ ແລະ ສາກົນ ມາໃຫ້ຄຳປຶກສາ, ຊີ້ແຈງ, ອະທິບາຍຫົວຂໍ້ວິທະຍາສາດໃດໜຶ່ງ ທີ່ເຫັນວ່າມີຄວາມຈຳເປັນ ຕາມການເຫັນດີຂອງ ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ;

9. ຈັດຕັ້ງການເກັບກຳຂໍ້ມູນ ຫຼື ທັດສະນະສຶກສາຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຫັນດີ ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ;

10. ເຂົ້າຮ່ວມກອງປະຊຸມຕ່າງໆ ທີ່ອົງການຈັດຕັ້ງຢູ່ພາຍໃນ ແລະ ຕ່າງປະເທດ ຈັດຂຶ້ນກ່ຽວກັບວຽກງານທິດສະດີ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ ຕາມການເຊີນ ແລະ ການອະນຸມັດຈາກການຈັດຕັ້ງ ຂັ້ນເທິງ;

11. ອອກຂໍ້ກຳນົດ, ຂໍ້ຕົກລົງ, ແຈ້ງການ, ລະບຽບການກ່ຽວກັບບັນຫາຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງສະພາທິດສະດີສູນກາງພັກ;

12. ຄຸ້ມຄອງ, ນຳໃຊ້, ຕົກລົງແຕ່ງຕັ້ງ, ຊັບຊ້ອນຈັດວາງຍົກຍ້າຍໜ້າທີ່, ປະຕິບັດນະໂຍບາຍ, ບຳລຸງກໍ່ສ້າງຍົກລະດັບ, ປະຕິບັດວິໄນ ແລະ ອື່ນໆ ຕໍ່ພະນັກງານ-ລັດຖະກອນ ແລະ ນັກຄົ້ນຄວ້າທິດສະດີທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງສະພາທິດສະດີສູນກາງພັກ ຕາມລະບຽບການທີ່ໄດ້ກຳນົດໄວ້;

13. ປະກອບສ່ວນເຂົ້າໃນການຕີພິມເຜີຍແຜ່ຜົນງານການຄົ້ນຄວ້າ ໃນໜັງສືພິມ, ເວັບໄຊ ແລະ ວາລະສານຕ່າງໆ ໃນແຕ່ລະປີໃຫ້ກວ້າງຂວາງ.

14. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5: ໂຄງປະກອບກົງຈັກ

ສະພາທິດສະດີສູນກາງພັກ ມີໂຄງປະກອບກົງຈັກ ດັ່ງນີ້:

1. ຄະນະປະຈຳສະພາທິດສະດີສູນກາງພັກ;
2. ຄະນະກຳມະການດ້ານການເມືອງ;
3. ຄະນະກຳມະການດ້ານຄວາມໝັ້ນຄົງ;
4. ຄະນະກຳມະການດ້ານເສດຖະກິດ-ການເງິນ;
5. ຄະນະກຳມະການດ້ານວັດທະນະທຳ-ສັງຄົມ;
6. ຄະນະເລຂາທິການວິທະຍາສາດ.

### ມາດຕາ 6: ໂຄງປະກອບບຸກຄະລາກອນ

ສະພາທິດສະດີສູນກາງພັກ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ສະພາທິດສະດີສູນກາງພັກ ມີປະທານ 01 ທ່ານ ເຊິ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍກົມການເມືອງສູນກາງພັກ ຕາມການສະເໜີ ຂອງຄະນະຈັດຕັ້ງສູນກາງພັກ. ປະທານຕ້ອງແມ່ນກຳມະການກົມການເມືອງສູນກາງພັກ, ຈະຄອບຕຳແໜ່ງການນຳຂັ້ນສູງໃນອົງການອື່ນກໍໄດ້;

2. ສະພາທິດສະດີສູນກາງພັກ ມີຮອງປະທານຈຳນວນໜຶ່ງ, ໃນນັ້ນ ມີຮອງປະທານປະຈຳການຜູ້ໜຶ່ງ. ບັນດາຮອງປະທານ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍກົມການເມືອງສູນກາງພັກ ຕາມການສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ແລະ ຕາມການເຫັນດີ ຂອງປະທານສະພາທິດສະດີສູນກາງພັກ;

ຮອງປະທານຜູ້ປະຈຳການ ມີຫ້ອງການສະພາທິດສະດີສູນກາງພັກ ເປັນກົງຈັກຊ່ວຍວຽກບໍລິຫານ, ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ ແລະ ພະນັກງານຈຳນວນໜຶ່ງ ປະຕິບັດໜ້າທີ່ປະຈຳການປົກກະຕິ ໂດຍຢູ່ພາຍໃຕ້ການຊີ້ນຳໂດຍກົງຂອງຮອງປະທານຜູ້ປະຈຳການ;

3. ສະພາທິດສະດີສູນກາງພັກ ມີຄະນະປະຈຳ (ປະທານ, ຮອງປະທານ, ຫົວໜ້າຄະນະກຳມະການຕ່າງໆ ແລະ ຫົວໜ້າຄະນະເລຂາທິການວິທະຍາສາດ ແມ່ນຄະນະປະຈຳໂດຍຕຳແໜ່ງ) ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍຄະນະເລຂາທິການສູນກາງພັກ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ແລະ ຕາມການເຫັນດີ ຂອງປະທານສະພາທິດສະດີສູນກາງພັກ;

4. ຄະນະກຳມະການດ້ານຕ່າງໆ ຂອງສະພາທິດສະດີສູນກາງພັກ ມີຫົວໜ້າ, ຮອງຫົວໜ້າ ແລະ ສະມາຊິກຄະນະກຳມະການຈຳນວນໜຶ່ງ.

ຫົວໜ້າ ຄະນະກຳມະການດ້ານຕ່າງໆ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍຄະນະເລຂາທິການສູນກາງພັກ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ແລະ ຕາມການເຫັນດີ ຂອງປະທານສະພາທິດສະດີສູນກາງພັກ.

ຮອງຫົວໜ້າ ແລະ ສະມາຊິກຄະນະກຳມະການດ້ານຕ່າງໆ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍປະທານສະພາທິດສະດີສູນກາງພັກ ໂດຍການເຫັນດີຂອງຄະນະປະຈຳ.

ໃນນັ້ນແຕ່ລະຄະນະກຳມະການ ແມ່ນມີພະນັກງານປະຈຳການຈຳນວນໜຶ່ງ. ໃນແຕ່ລະປີ ຄະນະກຳມະການດ້ານຕ່າງໆ ຂຶ້ນແຜນການເຄື່ອນໄຫວຄົ້ນຄວ້າບັນຫາຕ່າງໆທີ່ຢູ່ໃນພາລະບົດບາດຂອງຄະນະກຳມະການຕົນ ເພື່ອເປັນຂໍ້ມູນສະໜອງໃຫ້ສະພາທິດສະດີສູນກາງພັກ ກໍ່ຄືສູນກາງພັກຢ່າງເປັນປົກກະຕິ;

5. ຄະນະເລຂາທິການວິທະຍາສາດຂອງສະພາທິດສະດີສູນກາງພັກ ມີຫົວໜ້າ, ຮອງຫົວໜ້າ ແລະ ສະມາຊິກຄະນະເລຂາທິການວິທະຍາສາດ ຈຳນວນໜຶ່ງ.

ຫົວໜ້າຄະນະເລຂາທິການວິທະຍາສາດ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍຄະນະເລຂາທິການສູນກາງພັກ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ແລະ ຕາມການເຫັນດີ ຂອງປະທານສະພາທິດສະດີສູນກາງພັກ.

ຮອງຫົວໜ້າ ແລະ ສະມາຊິກຂອງຄະນະເລຂາທິການວິທະຍາສາດ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍປະທານສະພາທິດສະດີສູນກາງພັກ ໂດຍການເຫັນດີຂອງຄະນະປະຈຳ.

ບັນດາສະມາຊິກຄະນະເລຂາທິການວິທະຍາສາດຕ້ອງແມ່ນພະນັກງານນຳພາ-ຄຸ້ມຄອງ, ຜູ້ບໍລິຫານ. ມີວຸດທິການສຶກສາໃນລະດັບທີ່ແນ່ນອນ, ເປັນຜູ້ມີຄວາມຊຳນານງານ ແລະ ມີບົດຮຽນໃນການຄົ້ນຄວ້າວິທະຍາສາດ;

6. ສະພາທິດສະດີສູນກາງພັກ ມີສະມາຊິກສະພາທິດສະດີສູນກາງພັກ ປະຈຳການຢູ່ບັນດາກະຊວງ-ອົງການ ຂອງພັກ-ລັດ ເຊິ່ງແມ່ນນັກຄົ້ນຄວ້າທິດສະດີທີ່ເປັນຕົວແທນໃນຂົງເຂດໃດໜຶ່ງ; ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍຄະນະເລຂາທິການສູນກາງພັກ ຕາມການສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ແລະ ຕາມການເຫັນດີ ຂອງປະທານສະພາທິດສະດີສູນກາງພັກ. ສະມາຊິກສະພາທິດສະດີສູນກາງພັກ ມີອາຍຸການ 5 ປີ ແລະ ຈະຖືກສັບຊ້ອນເຂົ້າໃນຄະນະກຳມະການດ້ານ

ຕ່າງໆຂອງສະພາທິດສະດີສູນກາງພັກ, ສະມາຊິກສະພາທິດສະດີສູນກາງພັກ ຕ້ອງເປັນພະນັກງານການນໍາຂັ້ນສູງ, ຜູ້ບໍລິຫານລະດັບສູງ, ຜູ້ມີຕໍາແໜ່ງວິຊາການ ຫຼື ເປັນຜູ້ທີ່ມີປະສົບການໃນການຄົ້ນຄວ້າທິດສະດີໃນອົງການພັກ-ລັດ, ມີຄວາມຊໍານານໃນການຄົ້ນຄວ້າທິດສະດີ ແລະ ພຶດຕິກໍາ;

7. ສະມາຊິກສະພາທິດສະດີສູນກາງພັກ ແມ່ນຜູ້ທີ່ເຮັດວຽກງານປະຈໍາການຢູ່ບັນດາອົງການຕ່າງໆ, ມີຄວາມຮັບຜິດຊອບ ໃນການປະຕິບັດພາລະບົດບາດ, ໜ້າທີ່ ຂອງສະພາທິດສະດີສູນກາງພັກ; ຫ້າວຫັນເຂົ້າຮ່ວມວຽກງານທີ່ໄດ້ຮັບມອບໝາຍ. ຕັ້ງໜ້າເຂົ້າຮ່ວມກອງປະຊຸມຂອງສະພາທິດສະດີ, ກອງປະຊຸມຂອງບັນດາຄະນະກໍາມະການ ທີ່ຕົນສັງກັດ, ເຂົ້າຮ່ວມກອງປະຊຸມລະດັບຕ່າງໆ, ເຂົ້າຮ່ວມສໍາມະນາທິດສະດີ ທີ່ສະພາທິດສະດີສູນກາງພັກ ແລະ ຄະນະກໍາມະການຈັດຕັ້ງຂຶ້ນ.

## ໝວດທີ IV
## ຫຼັກການ, ແບບແຜນວິທີເຮັດວຽກ ແລະ ລະບອບປະຊຸມ

### ມາດຕາ 7: ຫຼັກການ

ສະພາທິດສະດີສູນກາງພັກ ເຄື່ອນໄຫວ ແລະ ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄື່ອນໄຫວພາຍໃຕ້ການຊີ້ນໍາໂດຍກົງ ແລະ ເປັນປະຈໍາຂອງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ. ແຕ່ລະປີ, ສະພາທິດສະດີສູນກາງພັກ ເຊີນຜູ້ຕາງໜ້າກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກເຂົ້າຮ່ວມປະຊຸມຕໍ່າສຸດ 1 ຄັ້ງ. ໃນກໍລະນີຈໍາເປັນສະພາທິດສະດີສູນກາງພັກ ເຊີນກໍາມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ເຂົ້າຮ່ວມປະຊຸມຄົ້ນຄວ້າວຽກງານໃດໜຶ່ງສະເພາະ;

2. ເຄື່ອນໄຫວ ແລະ ດໍາເນີນວຽກງານບົນພື້ນຖານແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ສອດຄ່ອງກັບທິດທາງແຜນການ ຂອງສະພາທິດສະດີສູນກາງພັກ;

3. ສໍາລັບບັນຫາທິດສະດີທີ່ມີຄວາມເຫັນແຕກຕ່າງກັນນັ້ນ, ສະພາທິດສະດີສູນກາງພັກ ມີໜ້າທີ່ລາຍງານໃຫ້ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ຊາບ, ພ້ອມທັງສະເໜີບັນດາຄໍາເຫັນຕ່າງໆ ຂອງສະມາຊິກ ສະພາທິດສະດີສູນກາງພັກ ຢ່າງຈະແຈ້ງ;

4. ສໍາລັບຄໍາສະເໜີ ແລະ ຂໍ້ຂ້ອງໃຈ ຂອງຄະນະຄົ້ນຄວ້າໂຄງການລະດັບຊາດ ຫຼື ຫົວຂໍ້ສະເພາະໃດໜຶ່ງຂອງບັນດານັກວິທະຍາສາດ ແລະ ບຸກຄົນທີ່ສົ່ງເຖິງ ສະພາທິດສະດີສູນກາງພັກ ນັ້ນແມ່ນຕ້ອງໄດ້ຄົ້ນຄວ້າ, ຕີລາຄາ ແລະ ລາຍງານໃຫ້ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກຊາບ;

5. ໃນການຄົ້ນຄວ້າ, ການແລກປ່ຽນຄໍາເຫັນ ແລະ ສໍາມະນາທິດສະດີ, ສະພາທິດສະດີສູນກາງພັກ ເຄົາລົບສິດເສລີພາບສ່ວນບຸກຄົນ, ເສີມຂະຫຍາຍປະຊາທິປະໄຕ, ຊຸກຍູ້ການສົນທະນາ, ແລກປ່ຽນຄໍາເຫັນເພື່ອຊອກຫາທາງອອກຕໍ່ບັນຫາທີ່ພວມເກີດຂຶ້ນ. ສໍາລັບຂໍ້ສະເໜີໃໝ່ເຖິງວ່າແມ່ນຂອງຄົນຜູ້ດຽວກໍໃຫ້ຄົ້ນຄວ້າ. ຕໍ່ບັນດາຂໍ້ສະເໜີ, ຂໍ້ຂ້ອງໃຈອື່ນກ່ຽວກັບແນວທາງ, ທັດສະນະ, ທິດນໍາ, ນະໂຍບາຍ ຂອງພັກ ແລະ ລັດ ທີ່ກໍາລັງປະຕິບັດຢູ່ນັ້ນ ກໍໃຫ້ມີການແລກປ່ຽນຄໍາເຫັນ ແລະ ສົນທະນາກັນ ໃນກອງປະຊຸມຄົ້ນຄວ້າພາຍໃນຂອງ ສະພາທິດສະດີສູນກາງພັກ ແລ້ວລາຍ

ງານໃຫ້ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ເພື່ອຊາບ ແລະ ຂໍທິດຊີ້ນຳ ໂດຍບໍ່ໄດ້ເຜີຍແຜ່ໄປສູ່ພາຍນອກ;

6. ການຮັບຮອງເອົາຜົນການຄົ້ນຄວ້າທິດສະດີຕາມໂຄງການ ແລະ ຫົວຂໍ້ຄົ້ນຄວ້າທີ່ໄດ້ຮັບອະນຸມັດ ຕ້ອງໄດ້ຮັບການເຫັນດີດ້ວຍຄະແນນສຽງສ່ວນຫຼາຍບໍ່ຕໍ່າກວ່າ 50 % ຂອງສະມາຊິກສະພາທິດສະດີສູນກາງພັກ ທີ່ເຂົ້າຮ່ວມປະຊຸມ. ຜົນສໍາເລັດຂອງການຄົ້ນຄວ້າ ຕ້ອງມີມະຕິຮັບຮອງໂດຍປະທານສະພາທິດສະດີສູນກາງພັກ;

7. ປະຕິບັດຢ່າງເຂັ້ມງວດບັນດາລະບຽບການ ແລະ ຂໍ້ກຳນົດ ຂອງພັກ ແລະ ກົດໝາຍຂອງລັດ.

**ມາດຕາ 8: ແບບແຜນວິທີເຮັດວຽກ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລືເປັນໝູ່ຄະນະ, ແບ່ງວຽກງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ, ປະຕິບັດລະບອບຫົວໜ້າດຽວ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງໝູ່ຄະນະ ແລະ ນັກຄົ້ນຄວ້າທິດສະດີ;

2. ເຮັດວຽກມີແຜນການ, ໂຄງການ, ແຜນດໍາເນີນງານລະອຽດໂດຍມີຈຸດສຸມ ແລະ ລະດັບຄາດໝາຍເປັນແຕ່ລະໄລຍະ, ມີການປະສານສົມທົບຢ່າງກົມກຽວກັບບັນດາຂະແໜງການຕ່າງໆໃນການຄົ້ນຄວ້າທິດສະດີ;

3. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາປະເມີນຜົນເປັນແຕ່ລະໄລຍະ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເປັນປົກກະຕິ ແລະ ເຂັ້ມງວດ;

4. ປະຕິບັດລະບອບການພົວພັນ, ການປະສານງານຢ່າງເປັນປົກກະຕິໃນການແກ້ໄຂວຽກງານຕ່າງໆລະຫວ່າງ ຄະນະປະຈໍາສະພາທິດສະດີສູນກາງພັກ, ຄະນະກໍາມະການດ້ານຕ່າງໆ, ຄະນະເລຂາທິການວິທະຍາສາດ, ຫ້ອງການສະພາທິດສະດີສູນກາງພັກ ແລະ ບັນດາສະມາຊິກສະພາທິດສະດີສູນກາງພັກ.

**ມາດຕາ 9: ລະບອບປະຊຸມ**

ສະພາທິດສະດີສູນກາງພັກ ຖືເອົາກອງປະຊຸມສະພາ ເປັນການເຄື່ອນໄຫວຕົ້ນຕໍ. ກອງປະຊຸມສາມັນໄຂຂຶ້ນປີໜຶ່ງ 2 ເທື່ອ ເພື່ອພິຈາລະນາບັນຫາຕ່າງໆຕາມພາລະບົດບາດ ຂອງສະພາທິດສະດີສູນກາງພັກ. ໃນກໍລະນີຈໍາເປັນກໍ່ສາມາດເປີດກອງປະຊຸມວິສາມັນໄດ້;

ກອງປະຊຸມສະພາທິດສະດີສູນກາງພັກ ຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອມີສະມາຊິກເຂົ້າຮ່ວມ 2/3 ຂອງຈໍານວນສະມາຊິກທັງໝົດ ແລະ ມະຕິ ຂອງກອງປະຊຸມສະພາທິດສະດີສູນກາງພັກ ຕ້ອງໄດ້ຮັບການເຫັນດີຈາກສະມາຊິກສະພາທິດສະດີສູນກາງພັກ ຫຼາຍກວ່າ 50% ຂອງຜູ້ເຂົ້າຮ່ວມກອງປະຊຸມ;

ກອງປະຊຸມຄະນະປະຈໍາສະພາທິດສະດີສູນກາງພັກ ຈະເປີດຂຶ້ນຢ່າງໜ້ອຍ 3 ເດືອນເທື່ອໜຶ່ງ ເພື່ອພິຈາລະນາຕົກລົງບັນຫາເປັນໝູ່ຄະນະຕາມການຮຽກໂຮມ ຂອງປະທານສະພາທິດສະດີສູນກາງພັກ;

ກອງປະຊຸມ ຂອງຄະນະປະຈໍາສະພາທິດສະດີສູນກາງພັກ ຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອມີຈໍານວນສະມາຊິກຄະນະປະຈໍາ ເຂົ້າຮ່ວມກາຍເຄິ່ງໜຶ່ງ ຂອງຈໍານວນສະມາຊິກຄະນະປະຈໍາທັງໝົດ

ແລະ ມະຕິຕົກລົງ ຂອງກອງປະຊຸມຕ້ອງໄດ້ຮັບການເຫັນດີ ຫຼາຍກວ່າ 50% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 10: ງົບປະມານ ແລະ ຕາປະທັບ ຂອງສະພາທິດສະດີສູນກາງພັກ**

ສະພາທິດສະດີສູນກາງພັກ ເປັນຫົວໜ່ວຍງົບປະມານຂັ້ນສອງ ຂຶ້ນກັບຄະນະໂຄສະນາອົບຮົມສູນກາງພັກ; ງົບປະມານຮັບໃຊ້ການເຄື່ອນໄຫວຂອງສະພາທິດສະດີສູນກາງພັກ ແມ່ນໄດ້ມາຈາກງົບປະມານທີ່ລັດສະໜອງໃຫ້ໃນແຕ່ລະປີ ແລະ ໄດ້ຈາກງົບປະມານຂ້ອງຄົ້ນຄວ້າວິທະຍາສາດທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ຄຸ້ມຄອງ; ຖ້າມີຄວາມຈໍາເປັນກໍສາມາດນໍາໃຊ້ງົບປະມານຂ້ອງກອງທຶນພັກ ຕາມການຕົກລົງຂອງຂັ້ນເທິງ.

**ມາດຕາ 11: ຕາປະທັບ**

ສະພາທິດສະດີສູນກາງພັກ ມີຕາປະທັບເປັນຂອງຕົນເອງ ເພື່ອຮັບໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 12: ການຈັດຕັ້ງປະຕິບັດ**

ສະພາທິດສະດີສູນກາງພັກ ເປັນຜູ້ກໍານົດລະອຽດກ່ຽວກັບພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ແບບແຜນວິທີເຮັດວຽກ ຂອງກົງຈັກຊ່ວຍວຽກ ຕາມຄວາມເໝາະສົມ ເພື່ອປະຕິບັດພາລະບົດບາດ ຂອງສະພາທິດສະດີສູນກາງພັກ ໃຫ້ໄດ້ຮັບຜົນດີ.

ສະພາທິດສະດີສູນກາງພັກ, ອົງການຈັດຕັ້ງ ຂອງພັກ, ຂອງລັດ, ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ບັນດາແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ປະຕິບັດຕາມມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 13: ຜົນສັກສິດ**

ມະຕິຕົກລົງສະບັບນີ້ປ່ຽນແທນມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ເລກທີ 68/ຄລສພ ລົງວັນທີ 2/3/2022. ໃນຂະບວນການຈັດຕັ້ງປະຕິບັດວຽກງານຕົວຈິງ, ຖ້າຫາກພົບບັນຫາແມ່ນໃຫ້ປະທານສະພາທິດສະດີສູນກາງພັກ ພິຈາລະນາ, ປຶກສາຫາລືໃນຄະນະປະຈໍາ ແລະ ຂໍທິດຊີ້ນໍາຈາກຂັ້ນເທິງອີງຕາມເງື່ອນໄຂຕົວຈິງ. ມະຕິຕົກລົງສະບັບນີ້, ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະເລຂາທິການສູນກາງພັກ**
**ຜູ້ປະຈໍາການ**

ຄະນະເລຂາທິການສູນກາງພັກ

ວິໄລ ຫລ້າຄໍາຟອງ